# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 13 ຕຸລາ 2024 (10-13-2024)

---

## ກາອິນແລະອາເບນ: ໜ້າທີ່ຮັບຜິດຊອບຄອບຄົວ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຫວັງໃຫ້ພວກເຮົາເບິ່ງແຍງສະມາຊິກຄອບຄົວຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພໍ່ແມ່ສ່ວນຫຼາຍສາມາດເວົ້າເຖິງຄວາມແຕກຕ່າງລະຫວ່າງລູກໆຂອງເຂົາເຈົ້າ. ຄົນນຶ່ງອາດຈະມັກຊີວິດແບບພາຍນອກບ້ານ, ເປັນນາຍພານ, ແລະຊາວປະມົງ. ລູກອີກຄົນນຶ່ງ, ທີ່ຖືກລ້ຽງດູໃນຄອບຄົວດຽວກັນ, ອາດຈະເຕີບໂຕກາຍເປັນຄົນທີ່ມັກຢູ່ໃນເຮືອນ, ມັກກິລາເຊັ່ນບານບ້ວງ, ແຮັກເກັດບານ, ແລະລອຍນ້ຳ. ຄວາມຄິດຂອງການພັກຜ່ອນຂອງຜູ້ນຶ່ງແມ່ນໄປນອນປ່າແລະນອນຢູ່ເທິງພື້ນດິນ. ອີກຜູ້ນຶ່ງອາດຈະຕໍ່ຕ້ານວ່າ, "ຖ້າພາຍນອກມັນສັກແທ້ໆ, ເປັນຫຍັງແມງໄມ້ທັງປວງຈຶ່ງພຍາຍາມເຂົ້າໄປພາຍໃນ?" ຂ້າພະເຈົ້າເປັນລູກຜູ້ທີສາມຂອງຫ້າ. ຂ້າພະເຈົ້າມີອ້າຍເອື້ອຍນ້ອງ. ພວກເຮົາແຕ່ລະຄົນເກີດຫ່າງກັນສອງປີ. ສຳລັບຫົກປີ, ຂ້າພະເຈົ້າເປັນເດັກນ້ອຍຂອງຄອບຄົວ. ອ້າຍຂ້າພະເຈົ້າເກີດມາເພື່ອມ່ວນຊື່ນ, ເອື້ອຍກໍເກີດເພື່ອເພື່ອນຝູງ, ຂ້າພະເຈົ້າເກີດເພື່ອເອົາທາງຕົນເອງ. ບໍ່ວ່າຈະເປັນການຜ່ານນ້ຳຕາ, ຄວາມຢ້ານກົວ, ຄວາມເປັນມິດ, ຫຼືຄວາມຄຽດແຄ້ນ, ຂ້າພະເຈົ້າໄດ້ຊັກຊວນໃຫ້ຄົນອື່ນເຮັດໃນແບບຂອງຂ້າພະເຈົ້າ: ຄອບຄົວດຽວກັນ, ເຊື້ອພັນອັນດຽວກັນ, ເປັນເດັກນ້ອຍທີ່ແຕກຕ່າງກັນ. ມັນເປັນເຣື່ອງທີ່ໜ້າປລາດໃຈທີ່ເດັກນ້ອຍຈາກເຊື້ອພັນດຽວກັນ, ຊຸບລ້ຽງຢູ່ໃນສະພາບແວດລ້ອມດຽວກັນ, ສາມາດແຕກຕ່າງກັນຫຼາຍຈາກຊຶ່ງກັນແລະກັນ. ພີ່ນ້ອງຄູ່ທຳອິດທີ່ກ່າວມາໃນພຣະຄັມພີກໍຄືກາອິນແລະອາເບນ. ເຖິງແມ່ນວ່າເຂົາເຈົ້າມີຊີວິດຫຼາຍຊົ່ວອາຍຸກ່ອນໜ້ານີ້, ເຣື່ອງຂອງເຂົາເຈົ້າປະກອບມີຄວາມຄຸ້ນເຄີຍສະເພາະໃດນຶ່ງ. ມັນເປັນການສຶກສາຄວາມກົງກັນຂ້າມແລະຄວາມຂັດແຍ້ງ. ດັ່ງນັ້ນ, ພວກເຮົາຈະຊອກຫາວິທີທາງນຳເອົາຂໍ້ຂັດແຍ່ງທີ່ມັກຈະເປັນການທຳຣະຍົດໃນຄອບຄົວຂອງພວກເຮົາແນວໃດ? ເຮົາຕອບສນອງແນວໃດຕໍ່ໜ້າທີ່ທີ່ເຮົາຕ້ອງເບິ່ງແຍງສະມາຊິກໃນຄອບຄົວ?

*ແມ່ນຫຍັງທີ່ເຮັດໃຫ້ທ່ານແຕກຕ່າງຈາກຄົນອື່ນໆໃນຄອບຄົວຂອງທ່ານ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ສຶກສາພຣະຄັມພີ

### 1. ປະຖົມມະການ 4:1-2

*1. ຄັນຕໍ່ມາ ອາດາມໄດ້ສົມສູ່ຮ່ວມກັບພັຣຍາຂອງຕົນ ນາງຈຶ່ງຖືພາແລ້ວໄດ້ເກີດບຸດຊາຍຜູ້ນຶ່ງ ນາງຈຶ່ງເວົ້າວ່າ, "ຂ້າພຣະອົງໄດ້ບຸດຊາຍຍ້ອນພຣະຜູ້ເປັນເຈົ້າເປັນຜູ້ຊົດຊ່ອຍ." 2. ດັ່ງນັ້ນ ນາງຈຶ່ງຕັ້ງຊື່ໃຫ້ເດັກນ້ອຍວ່າ ກາອິນ ຕໍ່ມານາງໄດ້ບຸດຊາຍອີກຜູ້ນຶ່ງຊື່ວ່າ ອາເບນ ຊຶ່ງມີອາຊີບເປັນຜູ້ລ້ຽງແກະ ສ່ວນກາອິນເປັນພໍ່ນາ.*

ຈາກອາຊີບຂອງລາວ, ພວກເຮົາເຂົ້າໃຈວ່າມີຫຼາຍສິ່ງທີ່ຄວນເຄົາລົບກ່ຽວກັບກາອິນ. ລາວໄດ້ "ເຮັດວຽກກັບດິນ" (ຂໍ້ 2). ລາວໄດ້ສະແດງໃຫ້ເຫັນທັກສະຫຼາຍຢ່າງທີ່ຊາວກະສິກອນສລາດຕ້ອງມີເພື່ອຈະມີຄວາມສຳເລັດ. ໃນນັ້ນລວມທັງຄວາມຮູ້ແລະເບິ່ງລ່ວງໜ້າໃນການປູກພືດຂອງຕົນ, ຮູ້ວິທີປ້ອງກັນຫຍ້າແລະສັດຕູພືດ, ການກະກຽມດິນໃຫ້ແກ່ພືດແຕ່ລະປະເພດ, ຕຽມດິນໃຫ້ໄດ້ຮັບທາດອາຫານຄວາມຊຸ່ມຊື່ນແລະແສງຕາເວັນ, ຈັດແບ່ງນ້ຳຈາກກະແສມາໃຫ້ພືດຂອງຕົນ, ແລະການເກັບກ່ຽວຜົນລະປູກຂອງຕົນເພື່ອຮັກສາຊີວິດຄອບຄົວຂອງລາວ. ກາອິນເປັນຜູ້ມີຄວາມຊຳນິຊຳນານທີ່ໄດ້ນຳພາການກະເສດທີ່ລ້ຽງຊີວິດມະນຸດ. ອາເບນເປັນຜູ້ລ້ຽງຝູງແກະ. ຜູ້ລ້ຽງແກະຕ້ອງການທັກສະທີ່ແຕກຕ່າງກັນຢ່າງຊິ້ນເຊີງ. ລາວຕ້ອງຊີ້ນຳຝູງແກະແລະປົກປ້ອງພວກເຂົາຈາກອັນຕລາຍຂອງການຖືກແຍກໃຫ້

ຫຼົງແລະຈາກສັດທີ່ເປັນນັກລ້າ. ຜູ້ລ້ຽງແກະນໍາພາຝູງແກະຂອງລາວດ້ວຍຄວາມເຂົ້າໃຈ. ລາວຍອມຮັບວ່າແກະມີຂໍ້ຈໍາກັດແລະຈະບໍ່ວຸ້ນວາຍໃຈເມື່ອພວກມັນປະພຶດຄືແກະ. ຜູ້ລ້ຽງແກະຮູ້ເວລາແລະວິທີການໃຊ້ໄມ້ແສ້ຂອງຕົນເພື່ອທິດທາງຫຼືການແກ້ໄຂ. ຜູ້ລ້ຽງແກະຈະລ້ຽງຝູງແກະຂອງຕົນແລະອໍານວຍຄວາມສະດວກໃຫ້ຝູງແກະແຜ່ພັນແລະເພີ້ມຈໍານວນຝູງແກະຂອງລາວ. ກາອິນແລະອາເບນຕ້ອງການເຊິ່ງກັນແລະກັນແລະໄດ້ຮັບຜົນປໂຍດຈາກຄວາມເຂັ້ມແຂງຂອງກັນແລະກັນ. ກາອິນເຮັດວຽກກັບດິນແລະເຮັດໄຮ່ເຮັດນາ. ລາວໄດ້ຫຽມທີ່ດິນແລະປູກພືດເພື່ອລ້ຽງຄອບຄົວ. ອາເບນໄດ້ເປັນ "ຜູ້ລ້ຽງແກະ" (ຂໍ້ 2). ລາວເປັນຜູ້ລ້ຽງແກະ, ເຊິ່ງໃຫ້ທາດປໂຣຕີນທີ່ມີຄຸນຄ່າແລະຜົນປໂຍດຫຼາຍຢ່າງຂອງຂົນສັດ. ຈາກຂົນສັດມາເປັນເຄື່ອງນຸ່ງ, ຜ້າຫົ່ມ, ຜ້າພົມ, ເຄື່ອງປະດັບຕົກແຕ່ງ, ແລະຜ້າເຕັນ, ໃນຂນະທີ່ກາອິນແລະອາເບນແຕກຕ່າງກັນຫຼາຍ, ອ້າຍນ້ອງຄູ່ນີ້ກໍມີຄວາມຄ້າຍຄືກັນ. ທັງສອງມີຄຸນນະພາບການບໍາລຸງລ້ຽງ. ຜູ້ນຶ່ງໄດ້ລ້ຽງດູທີ່ດິນແລະຜູ້ນຶ່ງອີກໄດ້ລ້ຽງດູແກະ, ການລ້ຽງດູຂອງເຂົາເຈົ້າຕ້ອງມີວິນັຍສ່ວນຕົວຢ່າງຫຼວງຫຼາຍ. ກາອິນແລະອາເບນໄດ້ຮູ້ວ່າເຂົາເຈົ້າຈໍາເປັນຕ້ອງໄດ້ປະກອບສ່ວນ, ແຕ່ສິ່ງທີ່ຄວນຈະເປັນຄວາມສໍາພັນຂອງການຮ່ວມມືກັນນັ້ນໄດ້ຖືກແຕກແຍກໂດຍການປຽບທຽບ.

*ການເຮັດວຽກມີບົດບາດອັນໃດໃນຄອບຄົວຂອງທ່ານ?*

## 2. ປະຖົມມະການ 4:3-7

*3. ຄັນຕໍ່ມາວັນນຶ່ງ ກາອິນກໍເອົາຜົນລະປູກມາຖວາຍພຣະຜູ້ເປັນເຈົ້າ 4. ສ່ວນອາເບນກໍເອົາສັດເກີດແຕ່ທ້ອງປີທີ່ຕຸ້ຍພີດີງາມໃນຝູງສັດມາຂ້າ ແລ້ວເອົາເນື້ອສ່ວນທີ່ດີໆມາຖວາຍແກ່ພຣະຜູ້ເປັນເຈົ້າ ພຣະອົງຊົງພໍພຣະທັຍໃນການກະທໍາຂອງອາເບນ. 5. ສ່ວນການຖວາຍຂອງກາອິນນັ້ນບໍ່ເປັນທີ່ຊອບພຣະທັຍຂອງພຣະຜູ້ເປັນເຈົ້າເລີຍ ກາອິນຈຶ່ງຄຽດແຄ້ນ ແລະເຕັມໄປດ້ວຍຄວາມບໍ່ພໍໃຈ. 6. ເມື່ອພຣະຜູ້ເປັນເຈົ້າຊົງເຫັນດັ່ງນັ້ນ ຈຶ່ງຊົງຖາມກາອິນວ່າ, "ກາອິນເອີຍ ເປັນຫຍັງເຈົ້າຈຶ່ງຄຽດແຄ້ນ ແລະເຕັມໄປດ້ວຍຄວາມບໍ່ພໍໃຈ? 7. ຖ້າເຈົ້າກະທໍາດີ ເຈົ້າຄວນເງີຍໜ້າຂຶ້ນດ້ວຍຄວາມຍິ້ມແຍ້ມ ແຕ່ດ້ວຍວ່າເຈົ້າກະທໍາຊົ່ວ ຄວາມຊົ່ວກໍເໝືອນດັ່ງສັດຮ້າຍທີ່ກໍາລັງລໍຄອຍຖ້າຄຸບເຈົ້າ ມັນຕ້ອງຄຸບກິນເຈົ້າ ແຕ່ເຈົ້າຄວນເອົາຊະນະມັນໄດ້"*

ເມື່ອກາອິນແລະອາເບນເຕີບໂຕຂຶ້ນ, ມັນມາຮອດເວລາທີ່ພວກເຂົານະມັສການພຣະຜູ້ເປັນເຈົ້າ. ນີ້ແມ່ນການອ້າງອີງທໍາອິດທີ່ນໍາສະເໜີການຖວາຍຕໍ່ພຣະເຈົ້າໃນພຣະຄໍາພີ. ທັງສອງອ້າຍນ້ອງໄດ້ຖວາຍເຄື່ອງບູຊາຊຶ່ງເປັນພາກປະຕິບັດຂອງການນະມັສການ. ຄໍາເວົ້າດຽວກັນສໍາລັບການຖວາຍບູຊາແມ່ນໄດ້ໃຊ້ສໍາລັບທັງສອງຂອງຂວັນຂອງກາອິນແລະອາເບນ. ຄໍານີ້ຍັງເຮັດໜ້າທີ່ເປັນຄໍາສັບທາງວິຊາການສໍາລັບການຖວາຍເມັດພືດ (ລະບຽບພວກເລວີ 2:1-7). ຊາຍທັງສອງຮູ້ສຶກເຖິງຄວາມຈໍາເປັນໃນການນະມັສການເປັນເວລາດົນນານກ່ອນທີ່ພຣະຜູ້ເປັນເຈົ້າຈະນໍາເອົາລະບົບເຄື່ອງບູຊາໃນສມັຍຂອງໂມເຊ. ບາງທີເຂົາເຈົ້າໄດ້ຮຽນຮູ້ການປະຕິບັດຈາກອາດາມ. ໃນຖານະເປັນຊາວກະສິກອນ, ກາອິນໄດ້ນໍາເອົາບາງສ່ວນຂອງພືດຜົນຂອງຕົນໄປທີ່ແທ່ນບູຊາ. ການຖວາຍຂອງກາອິນເບິ່ງຄືວ່າມີຄວາມສງ່າງາມ, ບາງທີການແຜ່ກະຈາຍຂອງພືດພັນຂອງລາວແມ່ນຫຼູຫຼາ, ສວຍງາມ, ແລະລາຄາແພງ. ແຕ່ປາກົດວ່າມີບາງຢ່າງຂາດຫາຍໄປ. ໃນທາງກົງກັນຂ້າມ, ການຖວາຍຂອງອາເບນໃນຖານະຜູ້ລ້ຽງແກະໄດ້ປະກອບດ້ວຍລູກກົກຂອງຝູງແກະຂອງລາວແລະສ່ວນໄຂມັນຂອງພວກມັນ. ເມື່ອເວລາຜ່ານໄປ, ປະຊາຊົນຂອງພຣະເຈົ້າໄດ້ຮັບຮູ້ວ່າພຣະຜູ້ເປັນເຈົ້າບໍ່ພຽງແຕ່ຕ້ອງການ<u>ສິ່ງທີ່ດີທີ່ສຸດເທົ່ານັ້ນ</u>, ແຕ່ສ່ວນແບ່ງທໍາອິດຂອງຜົນຜລິດທັງໝົດຂອງພວກເຂົາອີກດ້ວຍ. ດັ່ງນັ້ນ, <u>ຜົນທໍາອິດເປັນຂອງພຣະອົງ</u>. ໃນປັສຄາຄັ້ງທໍາອິດ, ຊາວອິສຣາເອນໄດ້ຮັບການສອນວ່າລູກກົກໂຕຜູ້ຂອງຝູງເປັນຂອງພຣະຜູ້ເປັນເຈົ້າ (ອພຍ. 13:12). ຊາວອິສຣາເອນຍັງໄດ້ນໍາເອົານຶ່ງສ່ວນສິບຂອງຝູງແກະມາຖວາຍແກ່ພຣະອົງ (ລະບຽບພວກເລວີ 27:32). ການຖວາຍໄຂມັນເຊິ່ງເປັນສ່ວນທີ່ແຊບທີ່ສຸດຂອງສັດ, ເປັນສັນຍາລັກເຖິງຄວາມປາຖນາຂອງຜູ້ນະມັສການທີ່ຈະຖວາຍສິ່ງດີທີ່ສຸດແກ່ພຣະເຈົ້າ. ພຣະຜູ້ເປັນເຈົ້າໄດ້ມີຄວາມນັບຖືຕໍ່ອາເບນແລະເຄື່ອງຖວາຍຂອງລາວ. ພາສາເຮັບເຣີໂດຍພື້ນຖານແລ້ວໝາຍເຖິງການເບິ່ງດ້ວຍການຍອມຮັບ. ການຖວາຍຂອງອາເບນເປັນທີ່ຍອມຮັບໄດ້ເພາະວ່າອາເບນເປັນທີ່ຍອມຮັບ. ແຕ່ພຣະຜູ້ເປັນເຈົ້າບໍ່ໄດ້ພໍໃຈກາອິນແລະເຄື່ອງຖວາຍຂອງລາວ. ເປັນຫຍັງຂອງຂວັນຂອງກາອິນຈຶ່ງຖືກປະຕິເສດໃນຂນະທີ່ຂອງອາເບນຖືກຍອມຮັບ? ມັນມີການແປທີ່ເປັນໄປໄດ້ຫຼາຍຢ່າງ. ສ່ວນນຶ່ງຂອງຄໍາຕອບປາກົດຂຶ້ນຢູ່ໃນຄວາມ

ຈິງທີ່ວ່າເຄື່ອງຖວາຍຂອງກາອິນບໍ່ໄດ້ຖືກລະບຸວ່າເປັນຜົນຜລິດທີ່ດີທີ່ສຸດຂອງລາວ. ກົງກັນຂ້າມ, ອາເບນໄດ້ນຳເອົາລູກກົກຂອງສັດ-ພ້ອມທັງສ່ວນໄຂມັນຂອງພວກມັນ-ສັດທີ່ດີທີ່ສຸດໃນຝູງ. ຄວາມເປັນໄປໄດ້ອີກຢ່າງນຶ່ງກໍຄືຄວາມແຕກຕ່າງກັນໃນໃຈຫຼືທັສນະຂອງຊາຍສອງຄົນເຮັດໃຫ້ຄວາມແຕກຕ່າງໃນການຮັບເອົາການສເນີຂອງເຂົາເຈົ້າ. ຄວາມແຕກຕ່າງໃນການຕອບຮັບຂອງພຣະຜູ້ເປັນເຈົ້າຕໍ່ກັບການຖວາຍຂອງກາອິນແລະອາເບນແມ່ນຢູ່ໃນ<u>ຄວາມສັດຊື່ຂອງຜູ້ໃຫ້</u>. "ພຣະເຈົ້າຢາເວໄດ້ນັບຖືອາເບນແລະເຄື່ອງຖວາຍຂອງລາວ" (ປຖກ. 4:4). ພວກເຮົາອ່ານໃນເຮັບເຣີ 11:4,"ໂດຍຄວາມເຊື່ອຂອງອາເບນໄດ້ຖວາຍເຄື່ອງບູຊາທີ່ດີກວ່າກາອິນ." ຄວາມນັບຖືຂອງພຣະຜູ້ເປັນເຈົ້າຕໍ່ອາເບນແລະການຖວາຍຂອງລາວແມ່ນຍ້ອນຄວາມເຊື່ອຂອງລາວ. ຖ້າການຖວາຍເຄື່ອງບູຊາເປັນຈຸດສຳຄັນ, ກາອິນຈະຮູ້ວ່າພຣະເຈົ້າຕ້ອງການຫຍັງ. ລາວໄດ້ຮັບຜິດຊອບໃນການຮູ້ສິ່ງທີ່ຈະເຮັດໃນການນະມັສການຂອງພຣະຜູ້ເປັນເຈົ້າ. ສິ່ງທີ່ພວກເຮົາຮູ້ແມ່ນວ່າພຣະຜູ້ເປັນເຈົ້າ "ບໍ່ໄດ້ນັບຖືກາອິນແລະຂອງຖວາຍຂອງລາວ" (ຂໍ້ 5). ໃນພຣະຄັມພີໃໝ່, ພວກເຮົາພົບເຫັນການສະແດງອອກ, "ທາງຂອງກາອິນ" (ຢູດາ ຂໍ້ 11). ບາງຄົນຄິດວ່ານີ້ໝາຍເຖິງການຂ້າ, ແຕ່ວ່າມັນບອບບາງຫຼາຍແລະການຫຼອກລວງ-ຕົວເອງຫຼາຍກວ່າ. "ທາງຂອງກາອິນ" ເປັນທາງທີ່ນຳໄປສູ່ຄວາມຕາຍ. ກາອິນແລະອາເບນເປັນອ້າຍນ້ອງກັນຊຶ່ງແຕກຕ່າງຈາກກັນແລະກັນ. ອາເບນໄດ້ຖວາຍເຄື່ອງບູຊາແລະຖວາຍສິ່ງທີ່ດີທີ່ສຸດຈາກຝູງແກະຂອງລາວ, ແຕ່ກາອິນໄດ້ມາຫາພຣະເຈົ້າຕາມທາງຂອງຕົນ. ພຣະຜູ້ເປັນເຈົ້າບໍ່ໄດ້ນັບຖືກາອິນແລະການນະມັສການຂອງລາວ. ພວກເຮົາເຫັນວ່າການຕອບໂຕ້ຂອງກາອິນແມ່ນຄວາມໂກດຮ້າຍແລະຄວາມເຄືອງແຄ້ນ. <u>ຄວາມໂກດຮ້າຍໄດ້ລັກເອົາຄວາມດີ, ຄວາມຫ່ວງໃຍ, ແລະຄວາມຮັກທີ່ເຮົາຄວນມີຕໍ່ຄອບຄົວຂອງພວກເຮົາ. ຄວາມໂກດຮ້າຍເຮັດໃຫ້ເຮົາຫ່າງເຫີນຈາກເປົ້າໝາຍຂອງການເຮັດດີ, ແລະຄວາມສງົບສຸກໃນຄວາມສັມພັນຂອງເຮົາ</u>, ໃນທີ່ສຸດ, <u>ຫົວໃຈທີ່ເອົາຄວາມໂກດໄປໃສ່ຜູ້ໃດຜູ້ນຶ່ງສະທ້ອນເຖິງຫົວໃຈທີ່ບໍ່ເໝາະສົມກັບພຣະເຈົ້າ</u>, ເຖິງປານນັ້ນ, ພຣະເຈົ້າໄດ້ສະເດັດມາຫາກາອິນໃນຄວາມເມດຕາແລະໄດ້ຖາມຄຳຖາມເພື່ອຊ່ວຍໃຫ້ກາອິນພົບຄວາມເຂົ້າໃຈແລະການກັບໃຈ. ແທນທີ່ຈະສາລະພາບຄວາມບາບຂອງລາວແລະຖວາຍເຄື່ອງບູຊາທີ່ຖືກຕ້ອງ, ກາອິນໄດ້ຍອມໃຫ້ຄວາມບາບຄອບຄອງ. ລາວຍັງຄົງໃຈຮ້າຍແລະບໍ່ກັບໃຈ.

*ມີພອນອັນໃດແດ່ທີ່ມາຈາກການມອບສິ່ງທີ່ດີທີ່ສຸດຂອງເຮົາແກ່ພຣະເຈົ້າ?*

### 3. ປະຖົມມະການ 4:8-12

*8. ຕໍ່ມາ ກາອິນຈຶ່ງເວົ້າກັບອາເບນຜູ້ເປັນນ້ອງຊາຍວ່າ, "ເຮົາພາກັນໄປຍ່າງຫລິ້ນໃນທົ່ງນາເທາະ" ເມື່ອສອງອ້າຍນ້ອງອອກໄປເຖິງທົ່ງນາແລ້ວ ກາອິນຜູ້ເປັນອ້າຍກໍປໍ້ານ້ອງຊາຍລົງດິນແລ້ວຂ້າຖິ້ມ. 9. ເມື່ອເປັນເຊັ່ນນີ້ ພຣະຜູ້ເປັນເຈົ້າຈຶ່ງຊົງຖາມກາອິນວ່າ, "ກາອິນເອີຍ ນ້ອງຊາຍເຈົ້າຢູ່ໃສ?" ເຂົາໄດ້ຕອບວ່າ, "ຂ້າພຣະອົງບໍ່ຮູ້ຈັກ ຫລືວ່າພຣະອົງໃຫ້ຂ້າພຣະອົງເປັນຜູ້ຮັກສານ້ອງຊາຍຂອງຂ້າພຣະອົງຊັ້ນບໍ່?" 10. ພຣະຜູ້ເປັນເຈົ້າຊົງຖາມອີກວ່າ, "ກາອິນ ເປັນຫຍັງເຈົ້າຈຶ່ງທຳເຣື່ອງໂຫດຮ້າຍເຊັ່ນນີ້? ນ້ອງຊາຍເຈົ້ານອນເລືອດອາບຕົວຢູ່ໃນທົ່ງນາ ກິ່ນເລືອດຂອງເຂົາຂຶ້ນມາຫາເຮົາເໝືອນສຽງຮ້ອງຂໍແກ້ແຄ້ນ. 11. ເຈົ້າຈະຖືກດ່າ ຖືກສາບແຊ່ງ ແລະຖືກເນຣະເທດອອກຈາກທົ່ງນາບ່ອນຊຶ່ງດູດກິນເລືອດຂອງນ້ອງຊາຍຊຶ່ງເຈົ້າໄດ້ຂ້າ. 12. ຖ້າເຈົ້າເຮັດໄຮ່ທຳນາດິນນັ້ນຈະບໍ່ນຳຄວາມອຸດົມສົມບູນມາໃຫ້ ເຈົ້າຈະເປັນຄົນບໍ່ມີຫລັກແຫລ່ງຈະຊັດເຊພະເນຈອນໄປໃນໂລກນີ້"*

ແທນທີ່ຈະປ່ຽນທັສນະຄະຕິຂອງລາວ, ກາອິນກໍເກີດໂມໂຫ. ໃນການບໍ່ກັບໃຈຂອງກາອິນຄວາມໂກດເຄືອງຕໍ່ພຣະເຈົ້າທີ່ບໍ່ໄດ້ຮັບກ່ຽວກັບລາວຫຼືເຄື່ອງຖວາຍຂອງລາວ, ລາວໄດ້ເອົາມັນອອກໄປໃສ່ນ້ອງຊາຍຂອງລາວ. ຫົວໃຈຂອງກາອິນເຕັມໄປດ້ວຍຄວາມໂກດແຄ້ນຕໍ່ອາເບນເພາະວ່າລາວຄຽດແຄ້ນຕໍ່ພຣະເຈົ້າ. ກາອິນໄດ້ຕັດສິນໃຈວ່າຈະບໍ່ມີໃຜໄດ້ຮັບການນັບຖືຖ້າຫາກລາວບໍ່ສາມາດຖືກນັບຖື-ຖ້າກາອິນບໍ່ສາມາດຖວາຍເຄື່ອງບູຊາໃນທາງທີ່ລາວຕ້ອງການ, ອາເບນກໍຈະໄດ້ຖວາຍຄັ້ງສຸດທ້າຍຂອງລາວ. ມັນແມ່ນການຂ້າທີ່ໄດ້ວາງແຜນໄວ້ລ່ວງໜ້າໂດຍຄວາມກຽດຊັງຂອງລາວ. ເມື່ອເຮົາພິຈາຣະນາຄວາມໂມໂຫຂອງກາອິນ, ເຮົາຂ້ອນຂ້າງຄິດວ່າ, "ຂ້ອຍບໍ່ມີຫຍັງຄືກັບຕົວລາວ. ຂ້ອຍບໍ່ໄດ້ຂ້າຜູ້ໃດ." ແຕ່ພຣະເຢຊູກ່າວວ່າພວກເຮົາຄວນຕ້ານທານຄວາມຄຽດຮ້າຍເພາະພຣະເຈົ້າເຂົ້າໃຈຫົວໃຈຂອງພວກເຮົາແລະຖືວ່າຄວາມຄຽດຮ້າຍເປັນອັນຕລາຍຄືກັບການຂ້າຄົນ: "ທ່ານທັງຫຼາຍໄດ້ຍິນຄຳຊຶ່ງກ່າວໄວ້ແກ່ຄົນບູຮານວ່າ 'ຢ່າຂ້າຄົນ ຖ້າຜູ້ໃດຂ້າຄົນ ຜູ້ນັ້ນຈະຕ້ອງຖືກພິພາກສາລົງໂທດ'. ແຕ່ຝ່າຍເຮົາ ເຮົາບອກພວກທ່ານວ່າ ຜູ້ໃດຮ້າຍອ້າຍນ້ອງຂອງຕົນ ຜູ້ນັ້ນ

ຈະຕ້ອງຖືກໂທດ ຜູ້ໃດຈະເວົ້າແກ່ອ້າຍນ້ອງຂອງຕົນວ່າ 'ອ້າຍໂງ່' ຜູ້ນັ້ນຈະຖືກພິພາກສາລົງໂທດຈາກສານສູງ ຜູ້ໃດຈະເວົ້າວ່າ 'ອ້າຍບ້າ' ຜູ້ນັ້ນຈະມີໂທດເຖິງໄຟນະຮົກ. (ມັດທາຍ 5:21-22). ພວກເຮົາບໍ່ສາມາດຮັກພຣະບິດາຂອງເຮົາແລະຊັງພີ່ນ້ອງຂອງເຮົາ. 1 ໂຢຮັນ ເວົ້າວ່າ: "ຝ່າຍເຮົາທັງຫຼາຍຮູ້ແລ້ວວ່າ ພວກເຮົາໄດ້ຍ້າຍອອກຈາກຄວາມຕາຍເຂົ້າສູ່ຊີວິດແລ້ວ ກໍເພາະພວກເຮົາຮັກພີ່ນ້ອງ ຜູ້ໃດທີ່ບໍ່ຮັກ ຜູ້ນັ້ນກໍຍັງຢູ່ໃນຄວາມຕາຍ. ຜູ້ໃດທີ່ກຽດຊັງພີ່ນ້ອງຂອງຕົນກໍເປັນຜູ້ຂ້າຄົນ, ແລະເຈົ້າທັງຫຼາຍຮູ້ແລ້ວວ່າ ຜູ້ຂ້າຄົນບໍ່ມີຊີວິດອັນຕລອດໄປເປັນນິດຕັ້ງຢູ່ໃນຕົນຈັກຄົນ." (3:14-15). ຫຼັງຈາກກາອິນໄດ້ຂ້ານ້ອງຊາຍຂອງລາວແລ້ວ, ພຣະຜູ້ເປັນເຈົ້າໄດ້ໃຫ້ໂອກາດອີກເທື່ອນຶ່ງໃຫ້ລາວສາລະພາບແລະກັບໃຈໂດຍການຖາມລາວວ່າ, "ອາເບນນ້ອງຊາຍຂອງເຈົ້າຢູ່ໃສ?" (ປະຖົມມະການ 4:9). ແຕ່ແທນທີ່ຈະສາລະພາບ, ກາອິນຕົວະແລະສເນີຂໍ້ກ່າວຫຍາບຄາຍວ່າ: "ຂ້ານ້ອຍບໍ່ຮູ້ຈັກຫຼືວ່າພຣະອົງໃຫ້ຂ້ານ້ອຍເປັນຜູ້ຮັກສານ້ອງຊາຍຂອງຂ້ານ້ອຍບໍ?" (ຂໍ້ 9). ຄົນເຮົາມັກຈະພຍາຍາມຫຼີກລ້ຽງຄຳຕອບໂດຍກົງເມື່ອຈັບໄດ້ວ່າຕົວະ. ກາອິນຄິດວ່າລາວສາມາດສລາດກວ່າອົງພຣະຜູ້ເປັນເຈົ້າບໍ? ພຣະຜູ້ເປັນເຈົ້າໄດ້ໃຫ້ກາອິນໂອກາດອີກທີ່ຈະສາລະພາບບາບຂອງຕົນ, ແຕ່ແທນທີ່ຈະເຂົ້າໃກ້ອົງພຣະຜູ້ເປັນເຈົ້າ, ກາອິນພຽງແຕ່ຈົ່ມກ່ຽວກັບການລົງໂທດຂອງຕົນ. ຄວາມຕົກຕໍ່າຂອງລາວໄດ້ເລີ້ມຕົ້ນເມື່ອລາວໄດ້ປ່ຽນຈຸດສຸມຂອງການນະມັສການຂອງລາວຈາກການເສັຽສລະໄປສູ່ການສະແດງທີ່ໜ້າພໍໃຈຂອງສີມືຂອງຕົນເອງ. ມັນແມ່ນຈຸດນັ້ນເມື່ອຄວາມຄືບໜ້າຂອງບາບໄດ້ເລີ້ມຕົ້ນ. ກາອິນຕ້ອງການທາງຂອງຕົນ ແລະບໍ່ຍອມເຊື່ອຟັງສິ່ງທີ່ພຣະເຈົ້າຮຽກຮ້ອງ. ອັຄສາວົກໂຢຮັນໄດ້ກ່າວວ່າ ກາອິນໄດ້ຂ້າອາເບນຍ້ອນ "ການກະທຳຂອງລາວຊົ່ວຮ້າຍແລະການກະທຳຂອງນ້ອງຊາຍຂອງລາວເປັນທີ່ຊອບທັມ" (1 ໂຢຮັນ 3:12). ການກະທຳຊົ່ວຂອງລາວໄດ້ເລີ້ມຕົ້ນໂດຍນະມັສການພຣະເຈົ້າຕາມທາງຂອງລາວເອງ, ຕາມຊ່ວງເວລາຂອງລາວເອງ, ເຊິ່ງໃນທີ່ສຸດກໍນຳໄປສູ່ຄວາມຕາຍ. ຄວາມກຽດຊັງຂອງກາອິນເຮັດໃຫ້ຊີວິດແລະອາຊີບຂອງນ້ອງຊາຍຂອງລາວສັ້ນລົງ. ແລະມັນເຮັດໃຫ້ກາອິນເສັຽຄ່າການເຮັດວຽກຂອງຕົນເອງແລະຕລອດຊີວິດໃນການເນລະເທດ. ໂຣມ 12:10 ບອກວ່າ, "ຈົ່ງຮັກກັນເໝືອນສັນພີ່ນ້ອງສ່ວນການທີ່ໃຫ້ກຽດແກ່ກັນແລະກັນນັ້ນ ຈົ່ງຖືວ່າຜູ້ອື່ນດີກວ່າຕົນ." ມັນມີຜົນສະທ້ອນຮ້າຍແຮງແລະຍາວນານເມື່ອພວກເຮົາຫາກບໍ່ປະຕິບັດຕົວເປັນ "ຜູ້ດູແລຮັກສາອ້າຍນ້ອງຂອງພວກເຮົາ."

*ເຮົາມີໜ້າທີ່ຮັບຜິດຊອບອັນໃດສຳລັບສະມາຊິກໃນຄອບຄົວ?*

## ນຳໃຊ້ໃນຊີວິດ

ເຣື່ອງຂອງກາອິນແລະອາເບນໃຊ້ເປັນການເຕືອນເຖິງຄວາມເສັຽຫາຍທີ່ສາມາດເພີ້ມຂຶ້ນໃນຄວາມຂັດແຍ້ງໃນຄອບຄົວທີ່ບໍ່ໄດ້ຮັບການແກ້ໄຂ. ທ່ານຈະເຮັດແນວໃດໃນການຕອບສນອງຕໍ່ການສຶກສາໃນມື້ນີ້? ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ໄປນີ້:

- **ເຮັດໃຫ້ການນະມັສການເປັນຈິງ.** ການນະມັສການແມ່ນຫຼາຍກວ່າເພງສັຣເສີນ, ເພງນະມັສການ, ແລະການເທສນາໃນລະຫວ່າງການນະມັສການວັນອາທິດ. ໃຊ້ເວລາໃນອາທິດນີ້ເພື່ອນະມັສການພຣະເຈົ້າເປັນສ່ວນນຶ່ງຂອງການໃຊ້ເວລາຽບປະຈຳວັນຂອງທ່ານ.
- **ຮັບມືກັບຄວາມເຈັບປວດທາງສາຍສັມພັນ.** ໃຊ້ເວລາຄິດເຖິງຄວາມສັມພັນໃນຄອບຄົວຂອງທ່ານທີ່ເຄີຍປະສົບກັບຄວາມຮູ້ສຶກທີ່ເຈັບປວດ. ຂໍໃຫ້ພຣະວິນຍານບໍຣິສຸດເປັນທີ່ປຶກສາຂອງທ່ານໃນເຣື່ອງເຫຼົ່ານີ້.
- **ຮັບມືກັບຄວາມໃຈຮ້າຍ.** ເລີ້ມຕົ້ນຂະບວນການຂອງການລະບຸຄວາມໃຈຮ້າຍຂອງທ່ານແລະເລີ້ມຕົ້ນຂະບວນການໃຫ້ອະພັຍຜູ້ທີ່ເຮັດໃຫ້ທ່ານເຈັບປວດ. ສ້າງບັນຊີລາຍຊື່ແລະເລີ້ມຕົ້ນອະທິຖານໂດຍຜ່ານມັນ, ຂໍໃຫ້ພຣະເຈົ້າປະທານອຳນາດແກ່ທ່ານສາມາດໃຫ້ອະພັຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**